multi cultural communication

Produced by NSW HEALTH DEPARTMENT

Lao
December 2002
[DOH-7105]

# ການມະໂຣກຄລາມີເດັຍ

# Chlamydia

## ໂຣກຄລາມີເດັຍແມ່ນຫຍັງ?

ຄລາມີເດັຍແມ່ນການຕິດເຊື້ອໂຣກທີ່ຕິດຕໍ່ກັນທາງເພດ ຊຶ່ງສາມາດເກີດຂຶ້ນໄດ້ກັບທັງຊາຍແລະຍິງ. ໂຣກນີ້ເກີດມາຈາກເຊື້ອແບັກທີຣຽມ (bacterium). ມີຫຼາຍຄົນທີ່ຕິດເຊື້ອແບັກທີຣຽມແລ້ວແຕ່ບໍ່ອອກອາການຫຍັງ ແຕ່ກໍຍັງສາມາດແຜ່ຜາຍເຊື້ອແບັກທີຣຽມໄດ້. ຄລາມີເດັຍສາມາດມີຜົນກະທົບຕໍ່ທໍ່ປັດສະວະ (ທາງເດີນປັດສະວະ), ເຊີວິກສ໌ (ປາກມົດລູກ), ລຳໄສ້ສຸດ ແລະ ທະວານ, ຮູຄໍ, ແລະ ຕາ. ການຕິດເຊື້ອຄລາມີເດັຍອາດເຮັດໃຫ້ມີອາການແຊກຊ້ອນຫຼາຍຢ່າງ, ແຕ່ວ່າເຮົາສາມາດປ້ອງກັນໂຣກນີ້ໄດ້.

## ເຮົາຕິດເຊື້ອຄລາມີເດັຍໄດ້ຢ່າງໃດ?

ຄລາມີເດັຍແຜ່ຜາຍໂດຍການຮ່ວມເພດກັບຄົນທີ່ມີເຊື້ອນີ້ຢູ່ແລ້ວ. ຜູ້ທີ່ມີເປີເຊັນສູງໃນການຕິດເຊື້ອຄລາມີເດັຍແມ່ນ:

- ຊາຍໜຸ່ມແລະຍິງໜຸ່ມທີ່ມີການຮ່ວມເພດ;
- ຄົນທີ່ຫາກໍປ່ຽນຄູ່ຮ່ວມເພດໃໝ່;
- ຄົນທີ່ຫາກໍເປັນໂຣກຕິດຕໍ່ທາງເພດຊນິດອື່ນ.

## ຈະຮູ້ໄດ້ຢ່າງໃດວ່າເຮົາຕິດເຊື້ອຄລາມີເດັຍ?

ອາການອາດຈະເລີ້ມອອກພາຍໃນ 2–14 ມື້ຫຼັງຈາກຕິດເຊື້ອແລ້ວ. ຢ່າງໃດກໍດີ, ຄົນຜູ້ນຶ່ງອາດຈະມີເຊື້ອໂຣກຄລາມີເດັຍເປັນຫຼາຍໆເດືອນ, ຫຼື ອາດຮອດຫຼາຍໆປີ, ໂດຍທີ່ຕົນເອງບໍ່ຮູ້.

## ສຳລັບແມ່ຍິງ

ຖ້າແມ່ຍິງມີເຊື້ອຄລາມີເດັຍ, ລາວຈະສັງເກດເຫັນວ່າ:

- ມີການປັ້ນຫຼືເຈັບຢູ່ບໍຣິເວນທ້ອງນ້ອຍ;
- ປະຈຳເດືອນປ່ຽນແປງ (ໝາຍຄວາມວ່າປ່ຽນແປງກ່ຽວກັບເຣື່ອງຣະດູ)
- ຮູ້ສຶກເຈັບເວລາຖ່າຍເບົາ;
- ມີເລືອດອອກຫຼືເຈັບໃນລະຫວ່າງຮ່ວມເພດຫຼືຫຼັງຈາກນັ້ນ;
- ມີຄວາມປ່ຽນແປງເຣື່ອງລົງຂາວ.

**ສຳລັບຜູ້ຊາຍ**

ຖ້າຜູ້ຊາຍມີເຊື້ອຄລາມີເດັຍ, ລາວຈະສັງເກດເຫັນວ່າ:

- ມີໜອງໄຫຼອອກຈາກອະວັຍວະເພດ;
- ຮູ້ສຶກເຈັບເວລາຖ່າຍເບົາ;
- ໜ່ວຍອັນທະໃຄ່ແລະເຈັບ.

**ສຳລັບທັງຍິງແລະຊາຍ**

ອາດຈະເກີດການຕິດເຊື້ອທາງທະວານແຕ່ຕາມປົກກະຕິຈະບໍ່ໄດ້ສັງເກດເຫັນ. ບາງຄັ້ງອາດເຮັດໃຫ້ເຈັບທະວານຫຼືມີໜອງໄຫຼອກມາ.

**ຈະກວດຫາເບິ່ງຄລາມີເດັຍໄດ້ບໍ່?**

ຄລາມີເດັຍສາມາດກວດເບິ່ງໄດ້ໂດຍທ່ານໝໍຂອງທ່ານຫຼືທີ່ຄລີນິກສຸຂພາບທາງເພດ. ທ່ານໝໍຈະຕ້ອຍເອົາຊິ້ນສ່ວນຈາກທໍ່ປັດສະວະ, ປາກມົດລູກ, ຫຼື ທະວານ, ຫຼືນ້ຳປັດສະວະນ້ອຍນຶ່ງ. ຊິ້ນສ່ວນທີ່ຕ້ອຍເອົາ ຫຼື ຕົວຢ່າງຈະຖືກນຳໄປກວດຫາເຊື້ອຄລາມີເດັຍທີ່ຫ້ອງທົດລອງ.

**ຈະປິ່ນປົວຄລາມີເດັຍໂດຍວິທີໃດ?**

ຄລາມີເດັຍສາມາດປິ່ນປົວໄດ້ໂດຍງ່າຍໂດຍການໃຊ້ຢາຕ້ານເຊື້ອ. ເປັນສິ່ງສຳຄັນທີ່ທ່ານຕ້ອງໄດ້ໄປຫາທ່ານໝໍຂອງທ່ານຫຼືຄລີນິກສຸຂພາບທາງເພດເພື່ອໃຫ້ເພິ່ນກວດເບິ່ງແລະປິ່ນປົວ. ຖ້າຫາກອາການກັບມາເປັນໃໝ່, ໃຫ້ກັບຄືນໄປຫາທ່ານໝໍຫຼືຄລີນິກສຸຂພາບທາງເພດອີກ.

ເປັນສິ່ງສຳຄັນທີ່ທ່ານຕ້ອງກິນຢາຕ້ານເຊື້ອໃຫ້ໝົດຊຸດ, ເຖິງແມ່ນວ່າອາການໄດ້ຫາຍໄປແລ້ວກໍຕາມ, ເພາະວ່າເຊື້ອໂຣກຄລາມີເດັຍອາດຍັງບໍ່ທັນໄດ້ຕາຍໝົດເທື່ອ. ເປັນສິ່ງສຳຄັນເຊັ່ນກັນທີ່ທ່ານຕ້ອງບໍ່ຮ່ວມເພດຢ່າງນ້ອຍ 7 ວັນຫຼັງຈາກການປິ່ນປົວເລີ້ມຕົ້ນ, ເພາະວ່າເຊື້ອພຍາດຍັງສາມາດແຜ່ຜາຍໄດ້ຢູ່.

**ຈະມີອາການແຊກຊ້ອນບໍ?**

ມີ. ຖ້າບໍ່ປິ່ນປົວຄລາມີເດັຍຢ່າງຖືກຕ້ອງ ມັນອາດກໍ່ໃຫ້ເກີດອາການແຊກຊ້ອນຢ່າງຮ້າຍແຮງ.

**ອາການສຳລັບແມ່ຍິງອາການແຊກຊ້ອນມີດັ່ງນີ້:**

- ພາກສ່ວນແຖບທ້ອງນ້ອຍ (ກະໂທ້ຍ) ອັກເສບ (PID). ໝາຍເຖິງເມື່ອອະວັຍວະສືບພັນຊຶ່ງຕັ້ງຢູ່ໃນແຖບທ້ອງນ້ອຍເກີດອັກເສບ;
- ອະວັຍວະພາຍໃນແຖບທ້ອງນ້ອຍເກີດເກາະຕິດກັນ ແລະ ເຈັບແຖບທ້ອງນ້ອຍເຮື້ອຮັງ;
- ເປັນໝັນຍ້ອນທໍ່ຮັງໄຂ່ຖືກທຳລາຍ (ຍ້ອນເຍື່ອຜິວໜັງເປັນແປ້ວ);
- ທ້ອງນອກມົດລູກ (ເມື່ອຖືພາໃນທໍ່ຮັງໄຂ່ແທນທີ່ຈະແມ່ນໃນມົດລູກ).

**ສຳລັບຜູ້ຊາຍອາການແຊກຊ້ອນມີດັ່ງນີ້:**

- ຊ່ອງປັດສະວະອັກເສບທີ່ກັບເປັນຄືນອີກ;
- ໝ່ວຍອັນທະອັກເສບ (ຊຶ່ງກ່ຽວກັບທໍ່ທີ່ໄປຫາໝ່ວຍອັນທະ)

**ສຳລັບຍິງແລະຊາຍ ອາການແຊກຊ້ອນຕ່າງໆມີດັ່ງນີ້:**

- ໂຣກປະດົງ;
- ໂຣກເຍື່ອຫຸ້ມຕາອັກເສບແລະ ໂຣກ uveitis (ຕາອັກເສບ);
- ໂຣກ proctitis (ສຳໄສ້ສຸດອັກເສບ).

## ຄູ່ຮ່ວມເພດຈະຕ້ອງໄດ້ປິ່ນປົວບໍ?

ແມ່ນແລ້ວ. ຖ້າທ່ານມີເຊື້ອຄລາມີເດັຍ ທ່ານຕ້ອງບອກໃຫ້ຄູ່ຮ່ວມເພດຂອງທ່ານທຸກໆຄົນໃນລະຫວ່າງຫົກເດືອນທີ່ຜ່ານມາ ໃຫ້ເຂົາເຈົ້າໄປຫາໝໍຫຼືຄລີນິກສຸຂພາບທາງເພດເພື່ອກວດເບິ່ງແລະປິ່ນປົວ.

## ຈະປ້ອງກັນໂຣກຄລາມີເດັຍໄດ້ຢ່າງໃດ?

ການໃຊ້ຖົງອະນາມັຍເມື່ອຮ່ວມເພດທາງອະວັຍວະເພດຫຼືທາງທະວານສາມາດປ້ອງກັນໂຣກຄລາມີເດັຍ ແລະ ໂຣກຕິດຕໍ່ທາງເພດຢ່າງອື່ນ. ການໃຊ້ຖົງອະນາມັຍເປັນສິ່ງສຳຄັນຢ່າງຍິ່ງສຳລັບຜູ້ທີ່ຮ່ວມເພດກັບຫຼາຍກວ່າຄົນນຶ່ງຂຶ້ນໄປ.

## ຣາຍລະອຽດເພີ້ມເຕີມ - ໜ່ວຍອະນາມັຍສາທາຣະນະໃນຣັດ NSW

ຖ້າຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ຫຼືຕິດຕໍ່ຄລີນິກສຸຂພາບທາງເພດທ້ອງຖິ່ນ, ຊຶ່ງສາມາດຫາພົບໄດ້ ພາຍໃຕ້ຕົວໜັງສື 'S' ຢູ່ໃນພາກສ່ວນລາຍຊື່ທຸຣະກິດ ຂອງປຶ້ມຫົວຂາວ ຫຼື ໜ່ວຍອະນາມັຍສາທາຣະນະ ຫຼື ສູນອະນາມັຍຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້
'NSW Government' ທາງໜ້າຂອງປຶ້ມ ໂທຣະສັບ ຫົວຂາວ.

### ເຂດໃນຕົວເມືອງ

| | |
|---|---|
| Central Sydney | 9515 3180 |
| South Eastern Sydney | 9382 8333 |
| Northern Sydney | 9477 9400 |
| South Western Sydney | 9828 5944 |
| Western Sydney | 9840 3603 |
| Wentworth | 4734 2022 |

### ເຂດຊົນນະບົດ

| | |
|---|---|
| Central Coast | 4349 4845 |
| Mid North Coast | 6588 2750 |
| Mid Western | 6339 5548 |

| | |
|---|---|
| Hunter | 4924 6477 |
| Illawarra | 4255 2200 |
| New England | 6766 2288 |
| Northern Rivers | 6620 7500 |
| Macquarie | 6841 2216 |
| Southern | 4827 3428 |
| Greater Murray | 6021 4799 |
| Far West | (08) 8080 1499 |

**ກະຊວງສາທາຣະນະສຸກ (NSW Department of Health)**

73 Miller Street
North Sydney NSW 2059
Tel. (02) 9391 9000
Fax. (02) 9391 9101
TTY. (02) 9391 9900

NSW Health website
www.health.nsw.gov.au